**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ເລກທີ 3648/ກຕສ

ນະຄອນຫຼວງວຽງຈັນ, ວັນທີ 29 ກັນຍາ 2025

# ຂໍ້ຕົກລົງ
# ວ່າດ້ວຍ ຖານລະບົບດີຈີຕອນ

- ອີງຕາມ ກົດໝາຍ ວ່າດ້ວຍທຸລະກຳທາງເອເລັກໂຕຣນິກ (ສະບັບປັບປຸງ), ສະບັບເລກທີ 31/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ສະບັບເລກທີ 625/ນຍ, ລົງວັນທີ 22 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມເຕັກໂນໂລຊີດິຈິຕອນ, ສະບັບເລກທີ...487...., ລົງວັນທີ..12/.09/2025

**ລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ຖານລະບົບດີຈີຕອນທີ່ເຄື່ອນໄຫວການບໍລິການທຸລະກຳທາງເອເລັກໂຕຣນິກ ເພື່ອໃຫ້ດຳເນີນຖືກຕ້ອງ, ມີຄວາມໜ້າເຊື່ອຖື, ໂປ່ງໃສ, ຮັກສາຄວາມລັບຂອງຂໍ້ມູນ ແລະ ຮັບປະກັນຄວາມປອດໄພ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ເຮັດໃຫ້ປະເທດຊາດມີຄວາມໝັ້ນຄົງ, ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳ.

**ມາດຕາ 2 ຖານລະບົບດີຈີຕອນ**

ຖານລະບົບດີຈີຕອນ (Digital Platform) ແມ່ນ ໂຄງລ່າງພື້ນຖານດີຈີຕອນຮູບແບບໜຶ່ງ ທີ່ເຮັດໜ້າທີ່ບໍລິການສື່ກາງຮັບໃຊ້ການເຮັດທຸລະກຳທາງເອເລັກໂຕຣນິກ, ມີການບໍລິຫານຈັດການຂໍ້ມູນ ແລະ ສ້າງສະພາບແວດລ້ອມເພື່ອໃຫ້ເກີດການເຊື່ອມໂຍງລະຫວ່າງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ ໃຫ້ສາມາດນຳໃຊ້ການບໍລິການ ແລະ ເຮັດທຸລະກຳທາງເອເລັກໂຕຣນິກຮ່ວມກັນ ດ້ວຍການນຳໃຊ້ເຕັກໂນໂລຊີດິຈີຕອນ ແລະ ເຄືອຂ່າຍອິນເຕີເນັດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຢັ້ງຢືນມາດຕະຖານເຕັກນິກ** ໝາຍເຖິງ ການຮັບຮູ້ຄວາມຖືກຕ້ອງ, ຄວາມສອດຄ່ອງ ຂອງຖານລະບົບດີຈີຕອນ ທີ່ພັດທະນາຂຶ້ນຕາມມາດຕະຖານເຕັກນິກ ທີ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ກຳນົດ;

2. **ການຂົນສົ່ງ** ໝາຍເຖິງ ການບໍລິການເຄື່ອນຍ້າຍຜູ້ໂດຍສານ, ສິນຄ້າ, ວັດຖຸເຄື່ອງຂອງ ດ້ວຍຍານພາຫະນະຂົນສົ່ງປະເພດຕ່າງໆ ຕາມແຕ່ລະກໍລະນີ ທີ່ໄດ້ຮັບອະນຸຍາດຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

3. **ໂລຊິດສະຕິກ** ໝາຍເຖິງ ລະບົບຄຸ້ມຄອງບໍລິຫານຂະບວນການເຄື່ອນຍ້າຍສິນຄ້າ ທີ່ມີການວາງແຜນ, ການຄວບຄຸມ, ການເກັບຮັກສາ, ການຫຸ້ມຫໍ່, ການຄ່ຽນຖ່າຍ, ການຂົນສົ່ງ, ການບໍລິການ ແລະ ການສະໜອງຂໍ້ມູນຂ່າວສານທີ່ກ່ຽວຂ້ອງ ທີ່ມີປະສິດທິພາບ ແລະ ປະສິດທິຜົນ ຈາກຕົ້ນທາງໄປຍັງປາຍທາງ ຕາມຄວາມຕ້ອງການຂອງລູກຄ້າຢ່າງເປັນຕ່ອງໂສ້;

4. **ຜູ້ສະໜອງຈາກຕ່າງປະເທດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ບໍ່ມີພູມລຳເນົາ ແລະ ບໍ່ໄດ້ຈົດທະບຽນສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ແຕ່ເຄື່ອນໄຫວມີລາຍຮັບຈາກການສະໜອງສິນຄ້າດີຈີຕອນ ແລະ ການບໍລິການຮູບແບບດີຈີຕອນ ໃຫ້ແກ່ຜູ້ໃຊ້ບໍລິການ ຢູ່ ສປປ ລາວ;

5. **ເນື້ອຫາດີຈີຕອນ (Digital Content)** ໝາຍເຖິງ ຂໍ້ມູນໃນຮູບແບບທີ່ເປັນຕົວອັກສອນ, ຂໍ້ຄວາມ, ຮູບພາບ, ພາບເຄື່ອນໄຫວ, ສຽງ ຫຼື ໃນຮູບແບບອື່ນ ທີ່ສ້າງຂຶ້ນ, ເກັບຮັກສາ ແລະ ເຜີຍແຜ່ ດ້ວຍການນຳໃຊ້ເຕັກໂນໂລຊີດີຈີຕອນ ເພື່ອໃຫ້ຜູ້ໃຊ້ບໍລິການສາມາດເຂົ້າເຖິງຂໍ້ມູນ ໂດຍຜ່ານອຸປະກອນເອເລັກໂຕຣນິກ, ພລາດຟອມດີຈີຕອນ ຫຼື ສິ່ງອື່ນທີ່ຄ້າຍຄືກັນ;

6. **ຂະບວນການພັດທະນາລະບົບ** ໝາຍເຖິງ ຂະບວນການວາງແຜນ, ວິເຄາະ, ອອກແບບ, ການສ້າງ, ທົດສອບ ແລະ ບຳລຸງຮັກສາ ລະບົບທຸລະກຳທາງເອເລັກໂຕຣນິກ ທີ່ຜູ້ດຳເນີນທຸລະກິດມີຈຸດປະສົງໃຫ້ບໍລິການ ຢູ່ ສປປ ລາວ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວກ່ຽວກັບ ການບໍລິການລະບົບທຸລະກຳທາງເອເລັກໂຕຣນິກ ຢູ່ ສປປ ລາວ.

## ໝວດທີ 2
## ຖານລະບົບດີຈີຕອນ

**ມາດຕາ 5 ປະເພດຖານລະບົບດີຈີຕອນ**

ຖານລະບົບດີຈີຕອນ ທີ່ຕ້ອງໄດ້ຜ່ານການຢັ້ງຢືນມາດຕະຖານເຕັກນິກ ມີ 09 ປະເພດ ດັ່ງນີ້:

1. ຖານລະບົບການຄ້າ;
2. ຖານລະບົບການເງິນ;
3. ຖານລະບົບຂົນສົ່ງ ແລະ ໂລຊິດສະຕິກ;
4. ຖານລະບົບການສຶກສາ;
5. ຖານລະບົບບໍລິການສາທາລະນະສຸກ;
6. ຖານລະບົບບໍລິການທ່ອງທ່ຽວ;
7. ຖານລະບົບບໍລິການເນື້ອຫາດີຈີຕອນ;
8. ຖານລະບົບເຄືອຂ່າຍສື່ສັງຄົມ;
9. ຖານລະບົບດີຈີຕອນອື່ນ.

**ມາດຕາ 6 ຖານລະບົບການຄ້າ**

ຖານລະບົບການຄ້າ ແມ່ນ ຖານລະບົບດີຈີຕອນ ທີ່ອໍານວຍຄວາມສະດວກການເຄື່ອນໄຫວກິດຈະກໍາການຊື້ຂາຍ, ແລກປ່ຽນ ສິນຄ້າ ລະຫວ່າງຜູ້ຄ້າ ແລະ ລູກຄ້າ ເປັນຕົ້ນ ຕະຫຼາດທາງເອເລັກໂຕຣນິກ, ຮ້ານຄ້າເອເລັກໂຕຣນິກ, ໂປຣແກຣມຂາຍສິນຄ້າ, ໂປຣແກຣມຕູ້ຂາຍສິນຄ້າ.

**ມາດຕາ 7 ຖານລະບົບການເງິນ**

ຖານລະບົບການເງິນ ແມ່ນ ຖານລະບົບດີຈີຕອນ ທີ່ອໍານວຍຄວາມສະດວກສໍາລັບການເຮັດທຸລະກໍາທາງການເງິນ ເປັນຕົ້ນ ການໃຫ້ບໍລິການຊໍາລະເງິນອອນລາຍ, ການໃຫ້ບໍລິການທະນາຄານດີຈີຕອນ, ກະເປົາເງິນເອເລັກໂຕຣນິກ, ໂປຣແກຣມຕູ້ຮັບຝາກ-ຖອນເງິນສົດ.

**ມາດຕາ 8 ຖານລະບົບຂົນສົ່ງ ແລະ ໂລຊິດສະຕິກ**

ຖານລະບົບຂົນສົ່ງ ແລະ ໂລຊິດສະຕິກ ແມ່ນ ຖານລະບົບດີຈີຕອນ ທີ່ອໍານວຍຄວາມສະດວກການເຄື່ອນໄຫວບໍລິການຂົນສົ່ງຜູ້ໂດຍສານ, ຂົນສົ່ງສິນຄ້າ, ຈັດສົ່ງສິນຄ້າ ແລະ ໂລຊິດສະຕິກ ເປັນຕົ້ນ ການໃຫ້ບໍລິການແທັກຊີອອນລາຍ, ການໃຫ້ບໍລິການຈັດສົ່ງອາຫານ.

**ມາດຕາ 9 ຖານລະບົບການສຶກສາ**

ຖານລະບົບການສຶກສາ ແມ່ນ ຖານລະບົບດີຈີຕອນ ທີ່ອໍານວຍຄວາມສະດວກໃຫ້ຜູ້ເຂົ້າໃຊ້ລະບົບສາມາດລົງທະບຽນ, ສະໜອງຫຼັກສູດການສຶກສາ, ການສິດສອນ, ການປະເມີນຜົນ ແລະ ການຢັ້ງຢືນ.

**ມາດຕາ 10 ຖານລະບົບບໍລິການສາທາລະນະສຸກ**

ຖານລະບົບບໍລິການສາທາລະນະສຸກ ແມ່ນ ຖານລະບົບດີຈີຕອນ ທີ່ອໍານວຍຄວາມສະດວກໃຫ້ຜູ້ເຂົ້າໃຊ້ລະບົບສາມາດເຂົ້າເຖິງຂໍ້ມູນສາທາລະນະສຸກ, ບໍລິການໃຫ້ຄໍາປຶກສາດ້ານສຸຂະພາບ, ລົງທະບຽນນັດໝາຍເຂົ້າກວດສຸຂະພາບ ແລະ ບໍລິການອື່ນ.

**ມາດຕາ 11 ຖານລະບົບບໍລິການທ່ອງທ່ຽວ**

ຖານລະບົບບໍລິການທ່ອງທ່ຽວ ແມ່ນ ຖານລະບົບດີຈີຕອນ ທີ່ອໍານວຍຄວາມສະດວກໃຫ້ຜູ້ເຂົ້າໃຊ້ລະບົບສາມາດເຂົ້າເຖິງຂໍ້ມູນແຫຼ່ງທ່ອງທ່ຽວ, ບໍລິການຈອງ-ນໍາພາທ່ຽວ, ບໍລິການຈອງທີ່ພັກ ແລະ ບໍລິການອື່ນ.

**ມາດຕາ 12 ຖານລະບົບບໍລິການເນື້ອຫາດີຈີຕອນ**

ຖານລະບົບບໍລິການເນື້ອຫາດີຈີຕອນ ແມ່ນ ຖານລະບົບດີຈີຕອນ ທີ່ໃຫ້ບໍລິການໃນການສ້າງ, ບໍລິຫານຈັດການ, ເຜີຍແຜ່ໂຄສະນາ, ກິດຈະກໍາການຕະຫຼາດ, ແບ່ງປັນເນື້ອຫາດີຈີຕອນ ໃຫ້ແກ່ຜູ້ເຂົ້າໃຊ້ລະບົບ ຫຼື ຖານລະບົບດີຈີຕອນທີ່ໃຫ້ຜູ້ໃຊ້ບໍລິການສາມາດສ້າງລາຍໄດ້ຈາກເນື້ອຫາດີຈີຕອນ.

**ມາດຕາ 13 ຖານລະບົບເຄືອຂ່າຍສື່ສັງຄົມ**

ຖານລະບົບເຄືອຂ່າຍສື່ສັງຄົມ ແມ່ນ ຖານລະບົບດີຈີຕອນ ທີ່ອະນຸຍາດໃຫ້ຜູ້ໃຊ້ບໍລິການສາມາດສ້າງ, ແບ່ງປັນເນື້ອຫາ, ສົນທະນາ, ສະແດງຄໍາຄິດເຫັນ ຫຼື ເຂົ້າຮ່ວມໃນເຄືອຂ່າຍສັງຄົມອອນລາຍ ລວມທັງມີຄຸນລັກສະນະ ທີ່ສາມາດເຮັດທຸລະກໍາທາງເອເລັກໂຕຣນິກຢູ່ພາຍໃຕ້ລະບົບຂອງຕົນ ເປັນຕົ້ນ ໃຫ້ບໍລິການຊໍາລະ, ຊື້ໂຄສະນາ, ຊື້ຂາຍ ສິນຄ້າ ຫຼື ການບໍລິການ.

**ມາດຕາ 14 ຖານລະບົບດີຈີຕອນອື່ນ**

ຖານລະບົບດີຈີຕອນອື່ນ ແມ່ນ ຖານລະບົບດີຈີຕອນ ທີ່ອໍານວຍຄວາມສະດວກໃນການເຄື່ອນໄຫວທຸລະກໍາ ໂດຍທາງກົງ ຫຼື ທາງອ້ອມ ຊຶ່ງມີບໍລິການ ດັ່ງນີ້:

1. ເຄື່ອງມືຄົ້ນຫາອອນລາຍ (Search engines);
2. ຕົວກາງຂໍ້ມູນອອນລາຍ (Online intermediation services);
3. ຜູ້ຊ່ວຍສະເໝືອນ (Virtual assistants);
4. ຊັບສິນດິຈິຕອນ;
5. ບໍລິການທີ່ເກັບຄ່າສະໝັກສະມາຊິກ (Subscription service system);
6. ເກມອອນລາຍ (Esports);
7. ຖານລະບົບອື່ນ.

## ໝວດທີ 3
## ມາດຕະຖານເຕັກນິກ ຂອງຖານລະບົບດິຈິຕອນ

### ມາດຕາ 15 ຂະບວນການພັດທະນາລະບົບ

ຖານລະບົບດິຈິຕອນທີ່ພັດທະນາຂຶ້ນ ຕ້ອງປະຕິບັດ ດັ່ງນີ້:

1. ສອດຄ່ອງຕາມມາດຕະຖານເຕັກນິກສາກົນໃນການພັດທະນາຊອບແວ ISO/IEC 29110;
2. ຮອງຮັບຕົວອັກສອນພາສາລາວ;
3. ຕ້ອງແຈ້ງເຄື່ອງມື ແລະ ພາສາທີ່ໃຊ້ໃນການພັດທະນາລະບົບ;
4. ລະບົບຕ້ອງມີປະສິດທິພາບ, ມີຄວາມພ້ອມໃຫ້ບໍລິການ ແລະ ນໍາໃຊ້ງ່າຍ;
5. ລະບົບຕ້ອງມີຄວາມຖືກຕ້ອງ ແລະ ໜ້າເຊື່ອຖື;
6. ມີລະບົບການແຈ້ງເຕືອນ ສໍາລັບສິນຄ້າ ຫຼື ການບໍລິການທີ່ອາດມີຜົນກະທົບ ຕໍ່ເດັກ ຫຼື ເຍົາວະຊົນ.

### ມາດຕາ 16 ການຄຸ້ມຄອງລະບົບ

ການຄຸ້ມຄອງຖານລະບົບດິຈິຕອນ ຕ້ອງປະຕິບັດ ດັ່ງນີ້:

1. ມີລະບົບຄວບຄຸມການເຂົ້າເຖິງຂໍ້ມູນ ເພື່ອກໍານົດສິດໃນການເຂົ້ານໍາໃຊ້ ຫຼື ການລະບຸຕົວຕົນໃຫ້ມີສິດເຂົ້າເຖິງຂໍ້ມູນ;
2. ມີການກໍານົດເງື່ອນໄຂການຕັ້ງລະຫັດຜ່ານ, ລະຫັດຜ່ານຢ່າງໜ້ອຍ ຕ້ອງມີ 8 ຕົວອັກສອນ;
3. ມີການເຂົ້າລະຫັດຂໍ້ມູນໃນສ່ວນຂອງລະຫັດຜ່ານ ຫຼື ວິທີການອື່ນທີ່ຄ້າຍຄືກັນ;
4. ມີລະບົບເກັບຮັກສາປະຫວັດການນໍາໃຊ້ລະບົບຂອງຜູ້ເຂົ້າໃຊ້ລະບົບ;
5. ມີການກໍານົດວິທີການຄຸ້ມຄອງລະບົບ, ການເຂົ້າສູ່ລະບົບ ແລະ ຄວບຄຸມຜູ້ເຂົ້າໃຊ້ໃນລະບົບຢ່າງເປັນລາຍລັກອັກສອນ.

### ມາດຕາ 17 ການເກັບຮັກສາຂໍ້ມູນທົ່ວໄປ

ການເກັບຮັກສາຂໍ້ມູນທົ່ວໄປ ຕ້ອງປະຕິບັດ ດັ່ງນີ້:

1. ແຈ້ງຖານຂໍ້ມູນທີ່ນໍາໃຊ້ ຂອງລະບົບ;
2. ເກັບຮັກສາໄວ້ຢູ່ ສປປ ລາວ ດ້ວຍຕົນເອງ ຫຼື ນໍາໃຊ້ການບໍລິການ ຂອງບຸກຄົນທີ່ສາມ ທີ່ໜ້າເຊື່ອຖື. ກໍລະນີ ຂໍ້ມູນ ແລະ ຖານຂໍ້ມູນເກັບຮັກສາໄວ້ຢູ່ຕ່າງປະເທດ ຕ້ອງຮັບປະກັນການເຂົ້າເຖິງ ແລະ ສະໜອງຂໍ້ມູນໃຫ້ທັນການ;
3. ສະຖານທີ່ເກັບຮັກສາຂໍ້ມູນ ຕ້ອງສອດຄ່ອງຕາມມາດຕະຖານສາກົນດ້ານຄວາມປອດໄພ ຂອງຂໍ້ມູນ ISO/IEC 27001;
4. ຮັບປະກັນ ກ່ຽວກັບຄວາມຄົບຖ້ວນສົມບູນ ຂອງຂໍ້ມູນ;
5. ມີລະບົບສໍາຮອງຂໍ້ມູນ ແລະ ກູ້ຄືນຂໍ້ມູນ ທີ່ສາມາດເຂົ້າເຖິງໄດ້;

6. ການເກັບຮັກສາຂໍ້ມູນປະຫວັດການນຳໃຊ້ລະບົບ ຢ່າງໜ້ອຍ ເກົ້າສິບ ວັນ. ກໍລະນີ ການເກັບຮັກສາຂໍ້ມູນກ່ຽວກັບການເງິນ ຂອງຖານລະບົບການເງິນ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ;

7. ປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 18 ການເກັບຮັກສາຂໍ້ມູນສ່ວນບຸກຄົນ**

ການເກັບຮັກສາຂໍ້ມູນສ່ວນບຸກຄົນ ຕ້ອງປະຕິບັດ ດັ່ງນີ້:

1. ອອກແບບລະບົບ ຫຼື ຖານຂໍ້ມູນ ທີ່ໃຫ້ຜູ້ໃຊ້ບໍລິການ ບັນທຶກສະເພາະຂໍ້ມູນທີ່ຈຳເປັນກ່ຽວຂ້ອງກັບການໃຊ້ວຽກເທົ່ານັ້ນ;

2. ຕ້ອງກຳນົດຂອບເຂດການເກັບຮັກສາຂໍ້ມູນສ່ວນບຸກຄົນ ຂອງຜູ້ໃຊ້ບໍລິການຕາມຄວາມຈຳເປັນ ແລະ ແຈ້ງຈຸດປະສົງຂອງການເກັບຮັກສາຂໍ້ມູນສ່ວນບຸກຄົນ ຢ່າງຈະແຈ້ງ;

3. ຕ້ອງໃຫ້ຄຳໝັ້ນສັນຍາ ແລະ ນຳໃຊ້ຂໍ້ມູນທີ່ເກັບຮັກສາໄວ້ ຕາມຈຸດປະສົງທີ່ໄດ້ແຈ້ງໄວ້ເທົ່ານັ້ນ;

4. ຜູ້ໃຫ້ບໍລິການ ຕ້ອງມີຄວາມຮັບຜິດຊອບຕໍ່ກັບຂໍ້ມູນ ທີ່ຕົນໄດ້ລວບລວມ, ເກັບຮັກສາ ແລະ ນຳໃຊ້;

5. ປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 19 ການຮັກສາຄວາມປອດໄພ**

ການຮັກສາຄວາມປອດໄພ ຕ້ອງປະຕິບັດ ດັ່ງນີ້:

1. ມີລະບົບປ້ອງກັນເຄືອຂ່າຍ;

2. ມີມາດຕະການຮັກສາຄວາມລັບຂອງຂໍ້ມູນ ເປັນຕົ້ນ ນຳໃຊ້ລາຍເຊັນດິຈິຕອນ, ນຳໃຊ້ລະບົບການເຂົ້າລະຫັດຂໍ້ມູນ, ມີກົດລະບຽບຮັກສາຄວາມລັບ ຂອງຂໍ້ມູນ;

3. ມີລະບົບຄວາມປອດໄພພື້ນຖານ, ລະບົບເຊີເວີ ຂອງຜູ້ໃຫ້ບໍລິການ ຕ້ອງມີປະສິດທິພາບ, ສະຖຽນ, ຕັ້ງຢູ່ໃນສະຖານທີ່ປອດໄພ ແລະ ມີເຈົ້າໜ້າທີ່ຄວບຄຸມຄວາມປອດໄພ;

4. ມີມາດຕະການຮັກສາຄວາມປອດໄພດ້ານເຕັກນິກ ແລະ ຂໍ້ມູນເອເລັກໂຕຣນິກ ລວມທັງການບໍລິຫານຄວາມສ່ຽງທີ່ເກີດຂຶ້ນຈາກການໃຈລະກຳ;

5. ມີການກວດສອບຄວາມປອດໄພດ້ານເຕັກນິກ ຢ່າງໜ້ອຍ 1 ຄັ້ງຕໍ່ປີ ຫຼື ທຸກຄັ້ງທີ່ມີການປັບປຸງປ່ຽນແປງລະບົບ. ການກວດສອບຕ້ອງດຳເນີນໂດຍຜູ້ກວດສອບທີ່ມີຄວາມຮູ້, ຄວາມສາມາດ, ປະສົບການ ແລະ ເປັນອິດສະລະຈາກໜ່ວຍງານທີ່ປະຕິບັດໜ້າທີ່ຄຸ້ມຄອງລະບົບ ພ້ອມທັງມີບົດລາຍງານຜົນການກວດສອບດັ່ງກ່າວເປັນລາຍລັກອັກສອນ ຜ່ານທາງເອເລັກໂຕຣນິກ ຫຼື ເປັນເຈ້ຍ;

6. ກໍລະນີຖານລະບົບການເງິນ ທີ່ສ້າງໃໝ່ ຫຼື ທຸກຄັ້ງທີ່ມີການປັບປຸງປ່ຽນແປງລະບົບ ຕ້ອງມີການທົດສອບການໂຈມຕີລະບົບ ເພື່ອປະເມີນຄວາມສ່ຽງທາງໄຊເບີ (Pentest - Penetration Testing);

7. ຮັບປະກັນການບໍລິການລູກຄ້າ 24/7, ມີທີມງານທີ່ມີປະສົບການ ແລະ ຄວາມຊ່ຽວຊານ ແກ້ໄຂບັນຫາຂອງລູກຄ້າຢ່າງມີປະສິດທິພາບ ແລະ ວ່ອງໄວທັນເວລາ;

8. ມີລະບົບເຂົ້າລະຫັດເຂົ້າລະຫັດຂໍ້ມູນ (Data Encryption) ໃນການຮັກສາຄວາມປອດໄພ ຂອງຂໍ້ມູນ (Data Security Solution) ຊຶ່ງປ້ອງກັນການເຂົ້າເຖິງຂໍ້ມູນດ້ວຍລະຫັດ (Encryption) ທີ່ເຮັດໃຫ້ຂໍ້ມູນນັ້ນເປັນຄວາມລັບ ແລະ ຜູ້ທີ່ມີສິດເທົ່ານັ້ນ ຈຶ່ງສາມາດອ່ານຂໍ້ມູນນັ້ນໄດ້ ໂດຍການຖອດລະຫັດ (Decryption) ແລະ ເຮັດໃຫ້ຂໍ້ມູນນັ້ນກັບມາໃນຮູບແບບທີ່ສາມາດໃຊ້ງານໄດ້;

9. ມີລະບົບກວດສອບ ຫຼື ດັກຈັບຂໍ້ມູນເອເລັກໂຕຣນິກ ເພື່ອກັ່ນຕອງຄວາມຖືກຕ້ອງ, ຄວາມສົມບູນຂອງຂໍ້ມູນເອເລັກໂຕຣນິກ ກ່ອນບັນທຶກລົງໃນລະບົບ ເປັນຕົ້ນ SQL injection, Cross site Scripting forgery ແລະ ລະບົບອື່ນ;

10. ຕ້ອງມີລະບົບປ້ອງກັນໄວລັດ ແລະ ມັນແວ ຄອມພິວເຕີ;

11. ການເຊື່ອມຕໍ່ລະບົບເຄືອຂ່າຍ ແລະ ອຸປະກອນທີ່ໃຊ້ໃນການເຊື່ອມຕໍ່ລະບົບເຄືອຂ່າຍ ຕ້ອງປະຕິບັດຕາມມາດຕະຖານທີ່ໄດ້ຮັບການອອກແບບລະບົບທີ່ຊັດເຈນ ຂອງອົງປະກອບເຄືອຂ່າຍພື້ນຖານ, ສາມາດສື່ສານລະຫວ່າງກັນໄດ້;

12. ປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 20 ການເຂົ້າເຖິງຖານລະບົບດິຈິຕອນ**

ການເຂົ້າເຖິງຖານລະບົບດິຈິຕອນ ຕ້ອງປະຕິບັດ ດັ່ງນີ້:

1. ມີລະບົບການຢັ້ງຢືນຕົວຕົນທາງດິຈິຕອນ ໃນການເຂົ້າໃຊ້ຂໍ້ມູນ;
2. ມີລະບົບການອອກຈາກລະບົບ (Log out);
3. ມີລະບົບສະໝັກສະມາຊິກ (Sign in) ແລະ ແກ້ໄຂຂໍ້ມູນຜູ້ນຳໃຊ້ລະບົບ (User profile);
4. ມີລະບົບການຈັດການ ການລືມລະຫັດຜ່ານ;
5. ນຳໃຊ້ reCAPTCHA ຫຼື ລະຫັດຮູບພາບ ເພື່ອປ້ອງກັນຄວາມພະຍາຍາມໃນການເຂົ້າສູ່ລະບົບແບບອັດຕະໂນມັດ;
6. ມີລະບົບກຳນົດໝົດເວລາການນຳໃຊ້ອັດຕະໂນມັດ (Session Timeouts) ໃນກໍລະນີ ບໍ່ມີການຕອບໂຕ້ ຫຼື ນຳໃຊ້ລະບົບ;
7. ຕ້ອງສະແດງຂໍ້ມູນ ນະໂຍບາຍຂໍ້ມູນສ່ວນບຸກຄົນ (Privacy policy) ແລະ ເງື່ອນໄຂການນຳໃຊ້ (Term & Conditions) ກ່ອນຜູ້ເຂົ້າໃຊ້ລະບົບ ຈະສະໝັກເປັນສະມາຊິກ ເພື່ອນຳໃຊ້ລະບົບ;
8. ປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 4
## ການອອກໃບຢັ້ງຢືນຖານລະບົບດິຈິຕອນ

**ມາດຕາ 21 ການຂໍອອກໃບຢັ້ງຢືນ**

ຜູ້ທີ່ມີຈຸດປະສົງ ດຳເນີນທຸລະກິດ ກ່ຽວກັບ ຖານລະບົບດິຈິຕອນທີ່ເຄື່ອນໄຫວການບໍລິການທຸລະກຳທາງເອເລັກໂຕຣນິກ ຕ້ອງຜ່ານການຢັ້ງຢືນຖານລະບົບດິຈິຕອນ ນຳຂະແໜງການເຕັກໂນໂລຊີ ແລະ ການສື່ສານ ກ່ອນຂໍອະນຸຍາດດຳທຸລະກິດ ນຳຂະແໜງການທີ່ກ່ຽວຂ້ອງ.

ຜູ້ທີ່ມີຈຸດປະສົງ ຂໍອອກໃບຢັ້ງຢືນຖານລະບົບດິຈິຕອນ ຕ້ອງຍື່ນຄຳຮ້ອງຂໍອອກໃບຢັ້ງຢືນ ພ້ອມດ້ວຍເອກະສານກ່ຽວຂ້ອງ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ນຳຂະແໜງການເຕັກໂນໂລຊີ ແລະ ການສື່ສານ ພິຈາລະນາອອກໃບຢັ້ງຢືນຖານລະບົບດິຈິຕອນ.

ການຍື່ນຄຳຮ້ອງຂໍອອກໃບຢັ້ງຢືນຖານລະບົບດິຈິຕອນ ສາມາດດຳເນີນໃນຮູບແບບເປັນເຈ້ຍ ຫຼື ຮູບແບບທາງເອເລັກໂຕຣນິກ ທີ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ກຳນົດໄວ້.

**ມາດຕາ 22 ເງື່ອນໄຂການອອກໃບຢັ້ງຢືນ**

ເງື່ອນໄຂການອອກໃບຢັ້ງຢືນຖານລະບົບດິຈິຕອນ ມີ ດັ່ງນີ້:

1. ເປັນນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ ແລະ ມີທຶນພຽງພໍສຳລັບການດຳເນີນທຸລະກິດ;
2. ມີເງື່ອນໄຂຄົບຖ້ວນ ແລະ ໄດ້ຮັບການຢັ້ງຢືນມາດຕະຖານເຕັກນິກ ຂອງຖານລະບົບດິຈິຕອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຫາ ມາດຕາ 20 ຂອງຂໍ້ຕົກລົງສະບັບນີ້. ກໍລະນີ ຖານລະບົບການເງິນ ແລະ ຖານລະບົບຊັບສິນດິຈິຕອນ ຕ້ອງມີກົນໄກຊອກຮູ້ລູກຄ້າ ແລະ ມີມາດຕະການຕ້ານສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

3. ສະໜອງຂໍ້ມູນແຜນວາດການອອກແບບຖານຂໍ້ມູນ, ແຜນວາດການໄຫຼຂໍ້ມູນຂອງລະບົບ, ແຜນວາດການເຊື່ອມຕໍ່ລະບົບເຄືອຂ່າຍ;

4. ມີມາດຕະການປົກປ້ອງຜູ້ໃຊ້ບໍລິການ ແລະ ລະບຽບການຄຸ້ມຄອງຖານລະບົບດີຈີຕອນ ຂອງຕົນ;

5. ມີສໍານັກງານ ແລະ ວັດຖຸເຕັກນິກ ທີ່ຮັບປະກັນ ເພື່ອຮັບໃຊ້ໃຫ້ແກ່ການດໍາເນີນທຸລະກິດ;

6. ມີພະນັກງານວິຊາການດ້ານເຕັກນິກໃນຈໍານວນທີ່ເໝາະສົມກັບຂະໜາດການໃຫ້ບໍລິການ;

7. ຊໍາລະຄ່າທໍານຽມ, ຄ່າບໍລິການ ແລະ ສະໜອງຂໍ້ມູນທີ່ເຊື່ອຖືໄດ້ ຕາມກົດໝາຍ;

8. ຕ້ອງລາຍງານ ກ່ຽວກັບການດໍາເນີນທຸລະກິດປະຈໍາປີ, ລາຍງານເມື່ອມີການປ່ຽນແປງຜູ້ບໍລິຫານ ຫຼື ການປ່ຽນແປງອື່ນ ຕໍ່ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ຜ່ານຊ່ອງທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ພາຍໃນກໍານົດ ສິບຫ້າວັນ ນັບແຕ່ວັນທີ່ມີການປ່ຽນແປງເປັນຕົ້ນໄປ;

9. ຕ້ອງໄດ້ຮັບການຕິດຕາມກວດກາຖານລະບົບດີຈີຕອນ ຈາກຂະແໜງການເຕັກໂນໂລຊີ ແລະ ການສື່ສານ ຢ່າງປົກກະຕິ ໜຶ່ງ ຄັ້ງຕໍ່ປີ. ກໍລະນີ ມີບັນຫາກ່ຽວກັບການເຮັດທຸລະກໍາທາງເອເລັກໂຕຣນິກໃນລະບົບຖານລະບົບດີຈີຕອນ ຕ້ອງໄດ້ຮັບການກວດກາເພີ່ມຕື່ມ ນອກຈາກການກວດກາປົກກະຕິ. ການລົງຕິດຕາມກວດກາຕົວຈິງ ຜູ້ໃຫ້ບໍລິການຖານລະບົບດີຈີຕອນ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທີ່ເກີດຂຶ້ນ ເປັນຕົ້ນ ຄ່າເດີນທາງ, ຄ່າທີ່ພັກ, ອັດຕາກິນ, ເງິນແຮ;

10. ເງື່ອນໄຂອື່ນ ຕາມການກໍານົດ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ.

### ມາດຕາ 23 ເອກະສານປະກອບການຂໍອອກໃບຢັ້ງຢືນ

ເອກະສານປະກອບ ການຂໍອອກໃບຢັ້ງຢືນຖານລະບົບດີຈີຕອນ ມີ ດັ່ງນີ້:

1. ຄໍາຮ້ອງ ຕາມແບບພິມ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ;

2. ບົດວິພາກເສດຖະກິດ-ເຕັກນິກ ຕາມແບບພິມ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ;

3. ລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ນໍາໃຊ້ຖານລະບົບດີຈີຕອນ ຂອງຕົນ;

4. ເອກະສານຢັ້ງຢືນຜົນການກວດສອບຄວາມປອດໄພ ຂອງຖານລະບົບດີຈີຕອນທີ່ໃຫ້ບໍລິການ. ກໍລະນີຖານລະບົບການເງິນ ຕ້ອງມີບົດລາຍງານຜົນການທົດສອບການໂຈມຕີລະບົບເພື່ອປະເມີນຄວາມສ່ຽງທາງໄຊເບີ (Pentest - Penetration Testing);

5. ສໍາເນົາໃບທະບຽນວິສາຫະກິດ;

6. ເອກະສານອື່ນ ຕາມການກໍານົດ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ.

### ມາດຕາ 24 ການພິຈາລະນາອອກໃບຢັ້ງຢືນ

ພາຍຫຼັງຂະແໜງການເຕັກໂນໂລຊີ ແລະ ການສື່ສານ ໄດ້ຮັບເອກະສານປະກອບການຂໍອອກໃບຢັ້ງຢືນຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ຕ້ອງພິຈາລະນາອອກໃບຢັ້ງຢືນຖານລະບົບດີຈີຕອນ ພາຍໃນກໍານົດ ສາມສິບວັນ ນັບແຕ່ວັນໄດ້ຮັບເອກະສານເປັນຕົ້ນໄປ.

ໃນກໍລະນີ ບໍ່ສາມາດອອກໃບຢັ້ງຢືນຖານລະບົບດີຈີຕອນໄດ້ ກໍ່ຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນ ໃຫ້ຜູ້ຂໍອອກໃບຢັ້ງຢືນຊາບ.

ໃນເວລາພິຈາລະນາອອກໃບຢັ້ງຢືນ ຖ້າເຫັນວ່າມີຄວາມຈໍາເປັນ ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ມີສິດທວງເອົາເອກະສານ, ຂໍ້ມູນເພີ່ມຕື່ມ, ລົງກວດກາ ຫຼື ເຊີນພາກສ່ວນທີ່ກ່ຽວຂ້ອງມາໃຫ້ຂໍ້ມູນ. ກໍລະນີ ມີການລົງກວດກາສະຖານທີ່ປະຕິບັດງານຕົວຈິງ ຜູ້ຂໍອອກໃບຢັ້ງຢືນ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທີ່ເກີດຂຶ້ນ ເປັນຕົ້ນ ຄ່າເດີນທາງ, ຄ່າທີ່ພັກ, ອັດຕາກິນ, ເງິນແຮ.

**ມາດຕາ 25 ການນຳໃຊ້ ແລະ ອາຍຸການນຳໃຊ້ໃບຢັ້ງຢືນ**

ເຈົ້າຂອງໃບຢັ້ງຢືນ ຕ້ອງນຳໃຊ້ໃບຢັ້ງຢືນຖານລະບົບດິຈິຕອນ ໃຫ້ຖືກຕ້ອງ, ສອດຄ່ອງຕາມຂອບເຂດ ແລະ ປະເພດການບໍລິການຖານລະບົບດິຈິຕອນທີ່ໄດ້ຮັບອະນຸຍາດ ໂດຍບໍ່ມີສິດມອບ, ໂອນ ຫຼື ໃຫ້ບຸກຄົນອື່ນ ນຳໃຊ້.

ໃບຢັ້ງຢືນຖານລະບົບດິຈິຕອນ ທີ່ຂໍການຢັ້ງຢືນຄັ້ງທຳອິດ ມີອາຍຸການນຳໃຊ້ ໜຶ່ງ ປີ ແລະ ສາມາດຕໍ່ອາຍຸ ໃບຢັ້ງຢືນ ໄດ້ຄັ້ງລະ ສາມ ປີ.

**ມາດຕາ 26 ການຕໍ່ໃບຢັ້ງຢືນ**

ເຈົ້າຂອງໃບຢັ້ງຢືນ ຕ້ອງຍື່ນຄຳຮ້ອງຂໍຕໍ່ໃບຢັ້ງຢືນ ນຳຂະແໜງການເຕັກໂນໂລຊີ ແລະ ການສື່ສານ ຢ່າງໜ້ອຍ ສີ່ສິບຫ້າ ວັນ ກ່ອນວັນໝົດອາຍຸການນຳໃຊ້ໃບຢັ້ງຢືນ ແລະ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຕໍ່ໃບຢັ້ງຢືນ ຕາມແບບພິມ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ;
2. ບົດລາຍງານ ການດຳເນີນທຸລະກິດໃນໄລຍະຜ່ານມາ ຕາມແບບພິມ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ;
3. ເອກະສານຢັ້ງຢືນ ຜົນການທົດສອບຄວາມປອດໄພ ຂອງຖານລະບົບດິຈິຕອນ ທີ່ໃຫ້ບໍລິການ ຂອງປີຫຼ້າສຸດ;
4. ສຳເນົາໃບອະນຸຍາດດຳເນີນທຸລະກິດ ຖ້າເປັນກິດຈະການທີ່ຕ້ອງຂໍອະນຸຍາດ;
5. ເອກະສານອື່ນ ຕາມການກຳນົດ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ.

ກໍລະນີ ໃບຢັ້ງຢືນເສຍ ຫຼື ເສຍຫາຍ ເຈົ້າຂອງໃບຢັ້ງຢືນ ຕ້ອງແຈ້ງຕໍ່ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ພາຍໃນກຳນົດ ເຈັດ ວັນລັດຖະການ ຢ່າງເປັນລາຍລັກອັກສອນ ເພື່ອຂໍອອກສຳເນົາໃບຢັ້ງຢືນ.

ກໍລະນີ ມີການປັບປຸງລຸ້ນ ຫຼື ມີການປ່ຽນແປງດ້ານເຕັກນິກ ຂອງຖານລະບົບດິຈິຕອນ ເຈົ້າຂອງໃບຢັ້ງຢືນ ຕ້ອງຍື່ນຄຳຮ້ອງຂໍອອກໃບຢັ້ງຢືນສະບັບໃໝ່.

**ມາດຕາ 27 ການປ່ຽນແປງ, ໂຈະ ຫຼື ຍົກເລີກໃບຢັ້ງຢືນ**

ຜູ້ໃຫ້ບໍລິການຖານລະບົບດິຈິຕອນ ທີ່ມີຈຸດປະສົງ ຂໍປ່ຽນແປງ, ໂຈະ ຫຼື ຍົກເລີກ ໃບຢັ້ງຢືນຖານລະບົບດິຈິຕອນ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການເຕັກໂນໂລຊີ ແລະ ການສື່ສານ ໂດຍມີການສະເໜີ ພ້ອມຊີ້ແຈງເຫດຜົນຢ່າງເປັນລາຍລັກອັກສອນ.

**ມາດຕາ 28 ການໂຈະໃບຢັ້ງຢືນ**

ໃບຢັ້ງຢືນລະບົບທຸລະກຳທາງເອເລັກໂຕຣນິກ ຈະຖືກໂຈະ ໃນກໍລະນີ ດັ່ງນີ້:

1. ມີການສະເໜີໂຈະ ຈາກຜູ້ດຳເນີນທຸລະກິດດ້ວຍຄວາມສະໝັກໃຈ;
2. ເຄື່ອນໄຫວໂດຍບໍ່ສອດຄ່ອງກັບປະເພດ ຫຼື ເກີນຂອບເຂດສິດ ຂອງໃບຢັ້ງຢືນ ທີ່ຜູ້ດຳເນີນທຸລະກິດໄດ້ຮັບອະນຸຍາດ;
3. ປອມແປງ, ເຊື່ອງອຳຂໍ້ມູນ ຫຼື ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ຕາມການກຳນົດ ຂອງອົງການຄຸ້ມຄອງ ແລະ ກວດກາ;
4. ບໍ່ສາມາດດຳເນີນທຸລະກິດໄດ້ຢ່າງເປັນປົກກະຕິ ເປັນເວລາ ໜຶ່ງຮ້ອຍແປດສິບ ວັນ;
5. ບໍ່ຊຳລະຄ່າທຳນຽມ, ຄ່າບໍລິການ ຫຼື ອາກອນໃຫ້ລັດ ຕາມລະບຽບການ;
6. ລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;
7. ພາຍຫຼັງທີ່ໄດ້ມີການກ່າວເຕືອນເປັນລາຍລັກອັກສອນ ຫຼື ຖືກສັ່ງໂຈະ ຜູ້ດຳເນີນທຸລະກິດ ຕ້ອງໄດ້ປັບປຸງແກ້ໄຂຂໍ້ຄົງຄ້າງ ພາຍໃນກຳນົດ ຫົກສິບ ວັນ.

**ມາດຕາ 29 ການຖອນໃບຢັ້ງຢືນ**

ໃບຢັ້ງຢືນຖານລະບົບດິຈິຕອນ ຈະຖືກຖອນ ໃນກໍລະນີ ດັ່ງນີ້:

1. ການບໍລິການ ທີ່ສ້າງຄວາມເສຍຫາຍຢ່າງຮ້າຍແຮງຕໍ່ເສດຖະກິດ-ສັງຄົມ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
2. ບໍ່ຕໍ່ໃບຢັ້ງຢືນ;
3. ນໍາໃບຢັ້ງຢືນໃຫ້ຜູ້ອື່ນໃຊ້, ເຊົ່າ ຫຼື ໂອນ ໂດຍບໍ່ໄດ້ຮັບອະນຸຍາດ;
4. ມີການສະເໜີຖອນ ຈາກຜູ້ດໍາເນີນທຸລະກິດດ້ວຍຄວາມສະໝັກໃຈ;
5. ຖືກໂຈະໃບຢັ້ງຢືນແລ້ວ ບໍ່ສາມາດແກ້ໄຂຂໍ້ຄົງຄ້າງ ຫຼື ຜົນການກວດກາ ຂອງອົງການຄຸ້ມຄອງ ພາຍໃນໄລຍະເວລາທີ່ໄດ້ກໍານົດໄວ້ ໃນຂໍ້ຕົກລົງສະບັບນີ້;
6. ຖືກສານຕັດສິນລົ້ມລະລາຍ;
7. ລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 30 ກາໝາຍຢັ້ງຢືນຖານລະບົບດິຈິຕອນ**

ກາໝາຍຢັ້ງຢືນຖານລະບົບດິຈິຕອນ ຕໍ່ໄປເອີ້ນວ່າ "*ກາໝາຍ*" ແມ່ນ ສັນຍາລັກ ຫຼື ເຄື່ອງໝາຍທີ່ຢັ້ງຢືນວ່າຖານລະບົບດິຈິຕອນ ໄດ້ຮັບການຂຶ້ນທະບຽນ ຫຼື ຜ່ານການຢັ້ງຢືນມາດຕະຖານເຕັກນິກຈາກຂະແໜງການເຕັກໂນໂລຊີ ແລະ ການສື່ສານ.

ແບບກາໝາຍ ແມ່ນ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ອອກແບບ ແລະ ມີອາຍຸການນໍາໃຊ້ເທົ່າກັບອາຍຸຂອງໃບທະບຽນ ຫຼື ໃບຢັ້ງຢືນຖານລະບົບດິຈິຕອນ.

ຜູ້ທີ່ໄດ້ຮັບໃບທະບຽນ ຫຼື ໃບຢັ້ງຢືນຖານລະບົບດິຈິຕອນ ຈະໄດ້ຮັບກາໝາຍ ແລະ ສາມາດນໍາໃຊ້ເພື່ອໂຄສະນາເຜີຍແຜ່ກ່ຽວກັບຖານລະບົບດິຈິຕອນຂອງຕົນ ເປັນຕົ້ນ ສະແດງເທິງຖານລະບົບດິຈິຕອນ, ຕິດກາໝາຍໃສ່ປ້າຍໂຄສະນາ ສື່ສິ່ງພິມ.

**ມາດຕາ 31 ຄ່າຢັ້ງຢືນຖານລະບົບດິຈິຕອນ ແລະ ຄ່າບໍລິການຄົ້ນຄວ້າ**

ຜູ້ຂໍອອກໃບຢັ້ງຢືນຖານລະບົບດິຈິຕອນ ຕ້ອງຊໍາລະຄ່າຢັ້ງຢືນຖານລະບົບດິຈິຕອນ ແລະ ຄ່າບໍລິການຄົ້ນຄວ້າ ມີ ດັ່ງນີ້:

**ກ. ສໍາລັບການອອກໃບຢັ້ງຢືນ ແລະ ຕໍ່ໃບຢັ້ງຢືນ ຖານລະບົບດິຈິຕອນ**

1. ຄ່າອອກໃບຢັ້ງຢືນ ແລະ ຕໍ່ໃບຢັ້ງຢືນ ຖານລະບົບການຄ້າ
   - ຕະຫຼາດເອເລັກໂຕຣນິກ ຈໍານວນ 5.000.000 ກີບ ຕໍ່ປີ;
   - ຮ້ານຄ້າເອເລັກໂຕຣນິກ ຈໍານວນ 2.000.000 ກີບ ຕໍ່ປີ;
   - ໂປຣແກຣຂາຍສິນຄ້າ, ຕູ້ຂາຍສິນຄ້າ ຈໍານວນ 1.000.000 ກີບ ຕໍ່ປີ;
2. ຄ່າອອກໃບຢັ້ງຢືນ ຫຼື ຕໍ່ໃບຢັ້ງຢືນ ຖານລະບົບການເງິນ
   - ທະນາຄານດິຈິຕອນ ຈໍານວນ 15.000.000 ກີບ ຕໍ່ປີ;
   - ການບໍລິການຊໍາລະ ຈໍານວນ 5.000.000 ກີບ ຕໍ່ປີ;
   - ກະເປົາເງິນເອເລັກໂຕຣນິກ ຈໍານວນ 3.000.000 ກີບ ຕໍ່ປີ;
   - ການບໍລິການສະຖາບັນການເງິນ ຈໍານວນ 3.000.000 ກີບ ຕໍ່ປີ;
   - ການບໍລິການຕົວກາງຊໍາລະຍ່ອຍ ຈໍານວນ 3.000.000 ກີບ ຕໍ່ປີ;
   - ໂປຣແກຣມຕູ້ຮັບຝາກ-ຖອນເງິນສົດ ຈໍານວນ 400.000 ກີບ ຕໍ່ຄັ້ງ;
3. ຄ່າອອກໃບຢັ້ງຢືນ ຫຼື ຕໍ່ໃບຢັ້ງຢືນ ຖານລະບົບຂົນສົ່ງ ແລະ ໂລຊິດສະຕິກ
   - ການບໍລິການຂົນສົ່ງ-ຈັດສົ່ງ ສິນຄ້າ, ວັດຖຸພັນ-ເຄື່ອງຂອງ ຈໍານວນ 3.000.000 ກີບ ຕໍ່ປີ;

- ຂົນສົ່ງຜູ້ໂດຍສານ/ແທັກຊີອອນລາຍ ຈຳນວນ 3.000.000 ກີບ ຕໍ່ປີ;
- ໂລຊິດສະຕິກ ຈຳນວນ 7.000.000 ກີບ ຕໍ່ປີ;

4. ຄ່າອອກໃບຢັ້ງຢືນ ຫຼື ຕໍ່ໃບຢັ້ງຢືນ ຖານລະບົບ ການສຶກສາ, ການບໍລິການສາທາລະນະສຸກ, ການບໍລິການທ່ອງທ່ຽວ ຫຼື ເຄືອຂ່າຍສື່ສັງຄົມ ຈຳນວນ 1.000.000 ກີບ ຕໍ່ປີ;

5. ຄ່າອອກໃບຢັ້ງຢືນ ຫຼື ຕໍ່ໃບຢັ້ງຢືນ ຖານລະບົບບໍລິການເນື້ອຫາດິຈິຕອນ ຈຳນວນ 2.000.000 ກີບ ຕໍ່ປີ;

6. ຄ່າອອກໃບຢັ້ງຢືນ ຫຼື ຕໍ່ໃບຢັ້ງຢືນ ຖານລະບົບບໍລິການຊັບສິນດິຈິຕອນ ຈຳນວນ 15.000.000 ກີບ ຕໍ່ປີ;

7. ຄ່າອອກໃບຢັ້ງຢືນ ຫຼື ຕໍ່ໃບຢັ້ງຢືນ ຖານລະບົບບໍລິການເກມອອນລາຍ (Esports) ຈຳນວນ 7.000.000 ກີບ ຕໍ່ປີ;

8. ຄ່າອອກໃບຢັ້ງຢືນ ຫຼື ຕໍ່ໃບຢັ້ງຢືນ ຖານລະບົບດິຈິຕອນອື່ນ ຈຳນວນ 2.000.000 ກີບ ຕໍ່ປີ.

**ຂ. ສຳລັບຄ່າບໍລິການຄົ້ນຄວ້າ**

1. ຄ່າກວດສອບ-ທົດລອງເຕັກໂນໂລຊີ ຈຳນວນ 2.000.000 ກີບ ຕໍ່ຄັ້ງ;
2. ຄ່າປະເມີນຄວາມພ້ອມໃຫ້ບໍລິການ ຈຳນວນ 1.000.000 ກີບ ຕໍ່ຄັ້ງ;
3. ຄ່າຈົດທະບຽນຜະລິດຕະພັນຖານລະບົບດິຈິຕອນ ຈຳນວນ 300.000 ກີບ ຕໍ່ປີ;
4. ຄ່າຄົ້ນຄວ້າເອກະສານວິຊາການ ຈຳນວນ 50.000 ກີບ ຕໍ່ໜ້າ;
5. ຄ່າປ່ຽນແປງເນື້ອໃນໃບຢັ້ງຢືນ ຈຳນວນ 300.00 ກີບ ຕໍ່ຄັ້ງ.

## ໝວດທີ 5
## ການບໍລິການຖານລະບົບດິຈິຕອນ ຂອງຜູ້ສະໜອງຈາກຕ່າງປະເທດ

### ມາດຕາ 32 ການບໍລິການຖານລະບົບດິຈິຕອນ ຂອງຜູ້ສະໜອງຈາກຕ່າງປະເທດ

ຜູ້ສະໜອງຈາກຕ່າງປະເທດ ທີ່ໃຫ້ບໍລິການຖານລະບົບດິຈິຕອນ ແກ່ຜູ້ໃຊ້ບໍລິການ ຢູ່ ສປປ ລາວ ຕ້ອງແຈ້ງໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ເພື່ອເກັບກຳຂໍ້ມູນ ແລະ ຕິດຕາມການເຄື່ອນໄຫວ.

ຜູ້ສະໜອງຈາກຕ່າງປະເທດ ທີ່ໃຫ້ບໍລິການຖານລະບົບດິຈິຕອນ ແກ່ຜູ້ໃຊ້ບໍລິການ ຢູ່ ສປປ ລາວ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ.

### ມາດຕາ 33 ການແຈ້ງຂຶ້ນທະບຽນຖານລະບົບດິຈິຕອນຂອງຜູ້ສະໜອງຈາກຕ່າງປະເທດ

ເອກະສານປະກອບ ການແຈ້ງຂຶ້ນທະບຽນຖານລະບົບດິຈິຕອນ ຂອງຜູ້ສະໜອງຈາກຕ່າງປະເທດ ມີ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ;
2. ສຳເນົາເອກະສານຢັ້ງຢືນການສ້າງຕັ້ງວິສາຫະກິດ;
3. ສຳເນົາໃບອະນຸຍາດດຳເນີນທຸລະກິດ ຖ້າເປັນກິດຈະການທີ່ຕ້ອງຂໍອະນຸຍາດ;
4. ສຳເນົາເອກະສານຢັ້ງຢືນຜົນການທົດສອບຄວາມປອດໄພ ຂອງຖານລະບົບດິຈິຕອນທີ່ໃຫ້ບໍລິການ;
5. ໜັງສືອະທິບາຍດ້ານເຕັກນິກ ກ່ຽວກັບຖານລະບົບດິຈິຕອນທີ່ໃຫ້ບໍລິການ;
6. ໜັງສືອະທິບາຍກ່ຽວກັບລະບຽບການ, ຂັ້ນຕອນ ແລະ ມາດຕະການ ທີ່ຜູ້ສະໜອງຈາກຕ່າງປະເທດ ໄດ້ຮັບຮອງເອົາ ເພື່ອປົກປ້ອງຄວາມຄົບຖ້ວນສົມບູນ ຂອງຂໍ້ມູນ, ຄວາມໜ້າເຊື່ອຖື, ຄວາມປອດໄພຂອງຂໍ້ມູນ, ຄວາມເປັນສ່ວນຕົວ ແລະ ຄວາມລັບຂອງຂໍ້ມູນສ່ວນບຸກຄົນ ຂອງຜູ້ໃຊ້ບໍລິການ;

ຜູ້ສະໜອງຈາກຕ່າງປະເທດ ທີ່ໃຫ້ບໍລິການຖານລະບົບດິຈິຕອນ ແກ່ຜູ້ໃຊ້ບໍລິການ ຢູ່ ສປປ ລາວ ຕ້ອງປະຕິບັດລະບອບການລາຍງານການດຳເນີນກິດຈະການຂອງຕົນທຸກປີ ໂດຍຮັບປະກັນຄວາມຄົບຖ້ວນ,

ຖືກຕ້ອງ, ຈະແຈ້ງ, ທັນເວລາ ແລະ ຕ້ອງໄດ້ຮັບການຕິດຕາມກວດກາ ຢ່າງເປັນປົກກະຕິ ໜຶ່ງ ຄັ້ງຕໍ່ປີ ຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ. ກໍລະນີ ມີການປ່ຽນແປງຜູ້ບໍລິຫານ ຫຼື ການປ່ຽນແປງອື່ນ ຕ້ອງແຈ້ງໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນລາຍລັກອັກສອນ ພາຍໃນກຳນົດ ສາມສິບວັນ ນັບແຕ່ວັນທີ່ມີການປ່ຽນແປງ ເປັນຕົ້ນໄປ.

**ມາດຕາ 34 ພັນທະທາງດ້ານການເງິນ**

ຜູ້ສະໜອງຈາກຕ່າງປະເທດ ທີ່ໃຫ້ບໍລິການຖານລະບົບດິຈິຕອນ ແກ່ຜູ້ໃຊ້ບໍລິການ ຢູ່ ສປປ ລາວ ຕ້ອງປະຕິບັດພັນທະທາງດ້ານການເງິນໃຫ້ຄົບຖ້ວນ ດັ່ງນີ້:

1. ຄ່າແຈ້ງຂຶ້ນທະບຽນ ຫຼື ຕໍ່ໃບທະບຽນ ຖານລະບົບດິຈິຕອນ ຈຳນວນ 1.000 ໂດລາສະຫະລັດ ຕໍ່ໃບຍັ້ງຢືນ ຕໍ່ປີ;

2. ຄ່າບໍລິການຄົ້ນຄວ້າ ຈຳນວນ 300 ໂດລາສະຫະລັດ ຕໍ່ຄັ້ງ ແລະ ຕ້ອງຊຳລະໃນວັນທີ່ຍື່ນຄຳຮ້ອງ.

ພັນທະຕ່າງໆຂ້າງເທິງນີ້ ແມ່ນກຳນົດເປັນຫຼັກການເພື່ອໃຫ້ຜູ້ດຳເນີນທຸລະກິດຈັດຕັ້ງປະຕິບັດ, ນອກຈາກທີ່ໄດ້ກຳນົດໄວ້ໃນຂ້າງເທິງນີ້ ຜູ້ດຳເນີນທຸລະກິດ ແລະ ຜູ້ທີ່ມີລາຍໄດ້ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 35 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ໃຫ້ບໍລິການຖານລະບົບດິຈິຕອນ ໂດຍບໍ່ໄດ້ຮັບອະນຸຍາດ;

2. ແອບອ້າງ ຫຼື ໂຄສະນາ, ບິດເບືອນ ທີ່ສ້າງຜົນເສຍຫາຍຕໍ່ການດຳເນີນທຸລະກິດ ໃຫ້ບໍລິການຖານລະບົບດິຈິຕອນ, ຜູ້ໃຊ້ບໍລິການຖານລະບົບດິຈິຕອນ ແລະ ສ້າງຜົນເສຍຫາຍໃຫ້ແກ່ສັງຄົມ;

3. ສ້າງອຸປະສັກ, ສິ່ງກີດຂວາງ ຫຼື ຂັດຂວາງການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່, ໃຊ້ຄວາມຮຸນແຮງ ຫຼື ນາບຂູ່ພະນັກງານ ຂອງລັດ ທີ່ລົງຕິດຕາມກວດກາ;

4. ປອມແປງເອກະສານ ແລະ ນຳໃຊ້ເອກະສານປອມແປງ;

5. ນຳໃຊ້ກາໝາຍຢັ້ງຢືນຖານລະບົບດິຈິຕອນ ໂດຍບໍ່ໄດ້ຮັບອະນຸຍາດ;

6. ແອບອ້າງຕົນເອງເປັນຕົວແທນ ໃນການສະເໜີຂໍອອກໃບຢັ້ງຢືນ, ໂຈະ ຫຼື ຍົກເລີກ ໃບຢັ້ງຢືນຖານລະບົບດິຈິຕອນ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 36 ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການຖານລະບົບດິຈິຕອນ**

ຫ້າມ ຜູ້ໃຫ້ບໍລິການຖານລະບົບດິຈິຕອນ ມີພຶດຕິກຳ ດັ່ງນີ້:

1. ໃຫ້ບໍລິການຖານລະບົບດິຈິຕອນ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ແຈ້ງຂຶ້ນທະບຽນ;

2. ນຳໃຊ້ໃບຢັ້ງຢືນຖານລະບົບດິຈິຕອນ ທີ່ໝົດອາຍຸ, ບໍ່ຕໍ່ໃບຢັ້ງຢືນ ຫຼື ບໍ່ຕໍ່ໃບທະບຽນ;

3. ນຳເອົາກາໝາຍໄປເຄື່ອນໄຫວ ຫຼື ກະທຳຜິດ ຕໍ່ກົດໝາຍ ແລະ ລະບຽບການ;

4. ບໍ່ແຈ້ງໃຫ້ອົງການຄຸ້ມຄອງ ໃນກໍລະນີ ມີການປ່ຽນແປງ, ໂຈະ ຫຼື ຍົກເລີກ ການໃຫ້ບໍລິການ;

5. ປອມແປງ, ເອົາໃບຢັ້ງຢືນໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ນຳໃຊ້, ໃຫ້ເຊົ່າ ຫຼື ໂອນ;

6. ໂຄສະນາເຜີຍແຜ່ທຸລະກິດ ຂອງຕົນບໍ່ມີມູນຄວາມຈິງ, ໃຫ້ບໍລິການຖານລະບົບດິຈິຕອນ ບໍ່ຖືກຕ້ອງກັບການເປີດເຜີຍຂໍ້ມູນ ຫຼື ໂຄສະນາ;

7. ປະຕິເສດການຮ່ວມມື ແລະ ສະໜອງຂໍ້ມູນໃຫ້ເຈົ້າໜ້າທີ່ ຂອງລັດໃນການກວດກາ, ເກັບກຳຂໍ້ມູນທີ່ກ່ຽວຂ້ອງກັບການໃຫ້ບໍລິການຖານລະບົບດິຈິຕອນ;

8. ສະໜອງຂໍ້ມູນບໍ່ຄົບຖ້ວນ, ບໍ່ຖືກຕ້ອງຕາມຄວາມເປັນຈິງ, ລາຍງານຊັກຊ້າ ຫຼື ບໍ່ລາຍງານ;

9. ບໍ່ຊຳລະຄ່າທຳນຽມ, ຄ່າບໍລິການ ຫຼື ພັນທະທາງດ້ານການເງິນອື່ນ ຕາມລະບຽບການ;

10. ມີພຶດຕິກຳອື່ນ ທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການ.

**ມາດຕາ 37 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ**

ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ ມີ ພຶດຕິກຳ ດັ່ງນີ້:

1. ລົງປະຕິບັດໜ້າທີ່ ໂດຍບໍ່ໄດ້ຮັບການແຕ່ງຕັ້ງ;

2. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ ບັງຄັບ, ນາບຂູ່ ໃຊ້ຄວາມຮຸນແຮງຕໍ່ບຸກຄົນອື່ນ ທີ່ກ່ຽວຂ້ອງ;

3. ກົດໜ່ວງ, ຖ່ວງດຶງ ແລະ ແກ່ຍາວເວລາໃນການພິຈາລະນາເອກະສານ;

4. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ, ປະລະໜ້າທີ່ ໂດຍບໍ່ມີຄວາມຮັບຜິດຊອບ, ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ ຫຼື ລຳອຽງຕໍ່ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ;

5. ທວງເອົາ, ຂໍເອົາ, ຮັບສິນບົນ, ສວຍໃຊ້ໜ້າທີ່ຕຳແໜ່ງ ສົມຮູ້ຮ່ວມຄິດ ຫຼື ມີພຶດຕິກຳທຸກຮູບແບບເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ພັກພວກ ຂອງຕົນ;

6. ປອມແປງ, ເປີດເຜີຍ ເອກະສານທາງລັດຖະການ, ຂໍ້ມູນ ແລະ ຄວາມລັບທາງທຸລະກິດ ຂອງຜູ້ດຳເນີນທຸລະກິດໃຫ້ບໍລິການຖານລະບົບດິຈິຕອນ;

7. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການຄຸ້ມຄອງ

**ມາດຕາ 38 ອົງການຄຸ້ມຄອງ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານການຄຸ້ມຄອງຖານລະບົບດິຈິຕອນ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

ກະຊວງເຕັກໂນໂລຊີ ແລະ ການສື່ສານ ມອບໃຫ້ກົມເຕັກໂນໂລຊີດິຈິຕອນ ເປັນເສນາທິການ ແລະ ເປັນເຈົ້າການ ໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານການຄຸ້ມຄອງຖານລະບົບດິຈິຕອນ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 39 ສິດ ແລະ ໜ້າທີ່ ຂອງກົມເຕັກໂນໂລຊີດິຈິຕອນ**

ໃນວຽກງານການຄຸ້ມຄອງຖານລະບົບດິຈິຕອນ ກົມເຕັກໂນໂລຊີດິຈິຕອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ໃນວຽກງານການຄຸ້ມຄອງຖານລະບົບດິຈິຕອນ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ເຜີຍແຜ່ແນະນຳຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດທົ່ວປະເທດ;

3. ພິຈາລະນາ ອອກ, ຕໍ່, ໂຈະ, ຖອນ ຫຼື ຍົກເລີກ ໃບຢັ້ງຢືນຖານລະບົບດິຈິຕອນ ແລະ ສຳເນົາສົ່ງໃຫ້ພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງ, ແຂວງ ເພື່ອເກັບກຳ ແລະ ສັງລວມສະຖິຕິ;

4. ຮັບແຈ້ງ, ຂຶ້ນທະບຽນ ຫຼື ຕໍ່ໃບທະບຽນ, ເກັບກຳຂໍ້ມູນ, ຕິດຕາມການເຄື່ອນໄຫວ ແລະ ເກັບຮັກສາບັນຊີຜູ້ສະໜອງຈາກຕ່າງປະເທດ ທີ່ໃຫ້ບໍລິການຖານລະບົບດິຈິຕອນ ແກ່ຜູ້ໃຊ້ບໍລິການ ຢູ່ ສປປ ລາວ;

5. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການໃຫ້ບໍລິການຖານລະບົບດີຈິຕອນ ໃຫ້ສອດຄ່ອງຕາມລະບຽບການ ແລະ ມາດຕະຖານເຕັກນິກທີ່ກຳນົດໄວ້. ລວມທັງແຕ່ງຕັ້ງພະນັກງານລົງຕິດຕາມ, ກວດກາການເຄື່ອນໄຫວດຳເນີນທຸລະກິດ ຂອງຜູ້ໃຫ້ບໍລິການຖານລະບົບດີຈິຕອນ;

6. ເກັບຄ່າທຳນຽມ, ຄ່າບໍລິການ, ຄ່າຢັ້ງຢືນ ແລະ ຄ່າແຈ້ງຂຶ້ນທະບຽນ ໃນການແຈ້ງຂຶ້ນທະບຽນ ແລະ ການອອກໃບຢັ້ງຢືນ ລວມທັງຄ່າປັບໃໝຕ່າງໆ ຕາມລະບຽບການ;

7. ແນະນຳ ແລະ ອຳນວຍຄວາມສະດວກຜູ້ໃຫ້ບໍລິການຖານລະບົບດີຈິຕອນ ກ່ຽວກັບຂັ້ນຕອນການປະກອບເອກະສານແຈ້ງຂຶ້ນທະບຽນ ແລະ ຂໍອອກໃບຢັ້ງຢືນ, ເກັບຮັກສາ ແລະ ສະໜອງຂໍ້ມູນຕ່າງໆ ໃຫ້ພາກສ່ວນກ່ຽວຂ້ອງ ແລະ ຂັ້ນເທິງ;

8. ກ່າວເຕືອນ, ສຶກສາອົບຮົມ ຫຼື ປັບໃໝ ຕໍ່ຜູ້ທີ່ລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

9. ພິຈາລະນາ ແລະ ແກ້ໄຂຄຳສະເໜີ ກ່ຽວກັບວຽກງານຄຸ້ມຄອງຖານລະບົບດີຈິຕອນ;

10. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຖານລະບົບດີຈິຕອນ ແລະ ການປະຕິບັດມາດຕະການຕໍ່ຜູ້ລະເມີດຂໍ້ຕົກລົງສະບັບນີ້;

11. ພົວພັນ ແລະ ຮ່ວມມືກັບສາກົນໃນວຽກງານການຄຸ້ມຄອງຖານລະບົບດີຈິຕອນ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 40 ສິດ ແລະ ໜ້າທີ່ ຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງ, ແຂວງ**

ໃນວຽກງານການຄຸ້ມຄອງ ຖານລະບົບດີຈິຕອນ ພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງ, ແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ແນະນຳ ກົດໝາຍ, ລະບຽບການ ແລະ ນິຕິກຳໃນວຽກງານການຄຸ້ມຄອງ ຖານລະບົບດີຈິຕອນ;

2. ພິຈາລະນາອະນຸມັດ, ຕໍ່, ປ່ຽນແປງ, ໂຈະ ແລະ ຖອນໃບຢັ້ງຢືນ ຖານລະບົບດີຈິຕອນ ຕາມຄວາມຮັບຜິດຊອບຂອງຕົນ;

3. ເກັບກຳສະຖິຕິ, ເກັບຮັກສາ ແລະ ສະໜອງຂໍ້ມູນຕ່າງໆ ກ່ຽວກັບຖານລະບົບດີຈິຕອນ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບ ຂອງຕົນພ້ອມທັງລາຍງານໃຫ້ກົມເຕັກໂນໂລຊີດີຈິຕອນຊາບ ຢ່າງເປັນລາຍລັກອັກສອນ ເປັນປົກກະຕິ;

4. ຕິດຕາມ ແລະ ກວດກາ ການປະຕິບັດເງື່ອນໄຂ, ມາດຕະຖານ ແລະ ລະບຽບການ ຕາມຂໍ້ຕົກລົງສະບັບນີ້ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບ ຂອງຕົນ;

5. ກ່າວເຕືອນ, ສຶກສາອົບຮົມ ຫຼື ປັບໃໝ ຕໍ່ຜູ້ທີ່ລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບ ຂອງຕົນ;

6. ຕິດຕາມ, ກວດກາ ແລະ ລາຍງານສະພາບການບໍລິການຖານລະບົບດີຈິຕອນທີ່ຢູ່ໃນການຄຸ້ມຄອງຂອງກົມເຕັກໂນໂລຊີດີຈິຕອນເປັນຜູ້ອອກໃບຢັ້ງຢືນ ແຕ່ມີສະຖານທີ່ຕັ້ງການດຳເນີນທຸລະກິດຢູ່ໃນທ້ອງຖິ່ນຂອງຕົນ ໃຫ້ຂັ້ນເທິງຮັບຊາບຕາມລະບອບການລາຍງານຢ່າງເປັນປົກກະຕິ;

7. ແນະນຳ ແລະ ອຳນວຍຄວາມສະດວກຜູ້ໃຫ້ບໍລິການຖານລະບົບດີຈິຕອນ ກ່ຽວກັບຂັ້ນຕອນການປະກອບເອກະສານແຈ້ງຂຶ້ນທະບຽນ ແລະ ຂໍອອກໃບຢັ້ງຢືນຖານລະບົບດີຈິຕອນ;

8. ພິຈາລະນາແກ້ໄຂຄຳສະເໜີ ກ່ຽວກັບວຽກງານການຄຸ້ມຄອງ ຖານລະບົບດີຈິຕອນ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບ ຂອງຕົນ;

9. ປະສານສົມທົບກັບພະແນກການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານຄຸ້ມຄອງຖານລະບົບດີຈິຕອນ ແລະ ການປະຕິບັດມາດຕະການຕໍ່ຜູ້ລະເມີດຂໍ້ຕົກລົງສະບັບນີ້;

10. ເກັບຄ່າທຳນຽມ ແລະ ຄ່າບໍລິການ ໃນການອອກໃບຢັ້ງຢືນຖານລະບົບດີຈິຕອນ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບ ຂອງຕົນ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 41 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 42 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໂຈະການເຄື່ອນໄຫວທຸລະກິດສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ໄວ້ຊົ່ວຄາວ, ຖອນໃບອະນຸຍາດດຳເນີນທຸລະກິດ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

**ມາດຕາ 43 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ເປັນຄັ້ງທຳອິດ ທີ່ບໍ່ເປັນອັນຕະລາຍ ແລະ ບໍ່ສ້າງຄວາມເສຍຫາຍ ຈະຖືກມາດຕະການສຶກສາອົບຮົມ.

**ມາດຕາ 44 ມາດຕະການທາງວິໄນ**

ເຈົ້າໜ້າທີ່ ແລະ ພະນັກງານ ທີ່ລະເມີດຂໍ້ຫ້າມໃນຂໍ້ຕົກລົງສະບັບນີ້ ຈະຖືກລົງວິໄນ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 45 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ໃນກໍລະນີ ດັ່ງນີ້:

1. ໃຫ້ບໍລິການຖານລະບົບດີຈິຕອນ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ແຈ້ງຂຶ້ນທະບຽນ ຈະຖືກປັບໃໝ ແຕ່ 40.000.000 ກີບ ຫາ 100.000.000 ກີບ;
2. ໃຫ້ບໍລິການຖານລະບົບດີຈິຕອນ ບໍ່ສອດຄ່ອງກັບປະເພດ ຫຼື ເກີນຂອບເຂດສິດ ຂອງໃບຢັ້ງຢືນ ທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 40.000.000 ກີບ;
3. ເປີດເຜີຍຂໍ້ມູນ ກ່ຽວກັບບັນຊີທຸລະກຳທາງເອເລັກໂຕຣນິກ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 10.000.000 ກີບ;
4. ນຳໃຊ້ລະບົບບັນຊີທຸລະກຳທາງເອເລັກໂຕຣນິກຂອງຜູ້ອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 30.000.000 ກີບ;
5. ສວຍໃຊ້ຄວາມໄດ້ປຽບ ຂອງລະບົບທຸລະກຳທາງເອເລັກໂຕຣນິກ ເພື່ອຈຳກັດການແຂ່ງຂັນ, ຫຼົບຫຼີກການປະຕິບັດພັນທະດ້ານການເງິນ ຈະຖືກປັບໃໝ 10.000.000 ກີບ;
6. ເຄື່ອນໄຫວດຳເນີນທຸລະກິດ ທີ່ບໍ່ມີຄວາມຍຸຕິທຳ, ມີການຈຳແນກຜູ້ໃຊ້ບໍລິການ ຈະຖືກປັບໃໝ 10.000.000 ກີບ;
7. ປະຕິເສດການຮ່ວມມື ແລະ ສະໜອງຂໍ້ມູນໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຂອງລັດ ຈະຖືກປັບໃໝ 20.000.000 ກີບ;
8. ທຳລາຍ, ກີດກັ້ນ ຫຼື ຂັດຂວາງ ການເຮັດວຽກ ຂອງລະບົບໃຫ້ບໍລິການລະບົບທຸລະກຳທາງເອເລັກໂຕຣນິກ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກປັບໃໝ 10.000.000 ກີບ;
9. ມີການປອມແປງ, ໃຫ້ເຊົ່າ, ຢືມ ຫຼື ການມອບໂອນໃບຢັ້ງຢືນ ໃຫ້ຜູ້ອື່ນນຳໃຊ້ ຈະຖືກປັບໃໝ 15.000.000 ກີບ;

10. ບໍ່ແຈ້ງ ຫຼື ແຈ້ງຊ້າກ່ອນກຳນົດ ກໍລະນີມີການປ່ຽນແປງ, ໂຈະ ຫຼື ຍົກເລີກການໃຫ້ບໍລິການ ຈະຖືກປັບໃໝ 10.000.000 ກີບ;

11. ແຈ້ງ ຫຼື ເປີດເຜີຍຂໍ້ມູນ ທີ່ບໍ່ຖືກຕ້ອງ ຊຶ່ງສົ່ງຜົນເສຍຫາຍຕໍ່ຜູ້ໃຊ້ບໍລິການ ຫຼື ປະຊາຊົນ ຈະຖືກປັບໃໝ 25.000.000 ກີບ;

12. ບໍ່ຕໍ່ ຫຼື ຕໍ່ອາຍຸໃບຢັ້ງຢືນ ຊ້າກ່ອນກຳນົດ ຈະຖືກປັບໃໝ 15.000.000 ກີບ;

13. ບໍ່ປະຕິບັດລະບອບລາຍງານ ຫຼື ລາຍງານຊ້າກ່ອນກຳນົດ ຈະຖືກປັບໃໝ 2.000.000 ກີບ.

**ມາດຕາ 46 ມາດຕະການທາງບໍລິຫານ**

ຜູ້ໃຫ້ບໍລິການຖານລະບົບດິຈິຕອນ ທີ່ຖືກປະຕິບັດມາດຕະການປັບໃໝ ຈະຖືກປະຕິບັດມາດຕະການທາງບໍລິຫານເພີ່ມຕື່ມ ຕາມແຕ່ລະກໍລະນີ ດັ່ງນີ້:

1. ປິດກັ້ນການເຂົ້າໃຊ້ງານຖານລະບົບດິຈິຕອນ;
2. ໂຈະໃບຢັ້ງຢືນຖານລະບົບດິຈິຕອນ;
3. ຖອນໃບຢັ້ງຢືນຖານລະບົບດິຈິຕອນ;
4. ມາດຕະການອື່ນ ຕາມການພິຈາລະນາ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ.

## ໝວດທີ 9
## ການຊຳລະ, ການຄຸ້ມຄອງ ແລະ ການນຳໃຊ້ ເງິນປັບໃໝ ແລະ ເງິນທີ່ໄດ້ຈາກເກັບຄ່າຢັ້ງຢືນຖານລະບົບດິຈິຕອນ

**ມາດຕາ 47 ການຊຳລະ**

ຜູ້ດຳເນີນກິດຈະການຖານລະບົບດິຈິຕອນ ຕ້ອງຊຳລະຄ່າຢັ້ງຢືນຖານລະບົບດິຈິຕອນ, ຄ່າແຈ້ງຂຶ້ນທະບຽນ ແລະ ຄ່າບໍລິການຄົ້ນຄວ້າ ທີ່ໄດ້ກຳນົດໄວ້ໃນມາດຕາ 31 ແລະ ມາດຕາ 34 ຂອງຂໍ້ຕົກລົງສະບັບນີ້ ໃຫ້ແກ່ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ຢູ່ກົມເຕັກໂນໂລຊີດິຈິຕອນ ຫຼື ໜ່ວຍງານທີ່ໄດ້ຮັບມອບໝາຍ.

ຜູ້ທີ່ລະເມີດລະບຽບການດຳເນີນກິດຈະການຖານລະບົບດິຈິຕອນ ຕ້ອງຊຳລະເງິນປັບໃໝຕາມບົດບັນທຶກການລະເມີດ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ໃຫ້ແກ່ຂະແໜງການກະຊວງເຕັກໂນໂລຊີ ແລະ ການສື່ສານ ຢູ່ກົມເຕັກໂນໂລຊີດິຈິຕອນ ຫຼື ໜ່ວຍງານທີ່ໄດ້ຮັບມອບໝາຍ.

**ມາດຕາ 48 ການນຳໃຊ້**

ເງິນທີ່ໄດ້ຈາກການເກັບຄ່າຢັ້ງຢືນຖານລະບົບດິຈິຕອນ, ຄ່າແຈ້ງຂຶ້ນທະບຽນ, ຄ່າບໍລິການຄົ້ນຄວ້າ ແລະ ຄ່າປັບໃໝຕາມຂໍ້ຕົກລົງສະບັບນີ້ ຫົກສິບສ່ວນຮ້ອຍ (60%) ມອບເຂົ້າງົບປະມານແຫ່ງລັດ ສ່ວນທີ່ເຫຼືອ ສີ່ສິບສ່ວນຮ້ອຍ (40%) ໃຫ້ຈັດເປັນລາຍຮັບ-ລາຍຈ່າຍວິຊາການ ແລະ ຂຶ້ນແຜນການນຳໃຊ້ງົບປະມານ ຕາມເປົ້າໝາຍການນຳໃຊ້ ທີ່ໄດ້ກຳນົດໄວ້ໃນມາດຕາ 49 ຂອງຂໍ້ຕົກລົງສະບັບນີ້.

ສຳລັບການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ ແມ່ນໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

**ມາດຕາ 49 ເປົ້າໝາຍການນຳໃຊ້**

ເງິນທີ່ໄດ້ຈາກການເກັບຄ່າຢັ້ງຢືນຖານລະບົບດິຈິຕອນ, ຄ່າແຈ້ງຂຶ້ນທະບຽນ, ຄ່າບໍລິການຄົ້ນຄວ້າ ແລະ ຄ່າປັບໃໝ ທີ່ຈັດເປັນລາຍຮັບ-ລາຍຈ່າຍ ວິຊາການ ນຳໃຊ້ເຂົ້າໃນວຽກງານ ດັ່ງນີ້:

1. ການລົງຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດວຽກງານ ກ່ຽວກັບການຄຸ້ມຄອງທຸລະກຳທາງເອເລັກໂຕຣນິກ, ຖານລະບົບດິຈິຕອນ ລວມທັງວຽກງານທີ່ຈຳເປັນ ແລະ ຮີບດ່ວນ;

2. ນຳໃຊ້ເຂົ້າໃນວຽກງານບໍລິຫານ, ໂຄສະນາເຜີຍແຜ່ ນິຕິກຳ, ປຶ້ມຄູ່ມື, ຈັດຝຶກອົບຮົມ ດ້ານວິຊາການ ກ່ຽວກັບການຄຸ້ມຄອງ ທຸລະກຳທາງເອເລັກໂຕຣນິກ ແລະ ຖານລະບົບດິຈິຕອນ;

3. ການຈັດຊື້ວັດຖຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ເພື່ອຮັບໃຊ້ວຽກງານ ກ່ຽວກັບການຄຸ້ມຄອງ ທຸລະກຳທາງເອເລັກໂຕຣນິກ ແລະ ຖານລະບົບດິຈິຕອນ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 50 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມເຕັກໂນໂລຊີດິຈິຕອນ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 51 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີ ..................... ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ລັດຖະມົນຕີ

ບໍ່ວຽງຄຳ ວົງດາລາ

### ເອກະສານຊ້ອນທ້າຍ

### ການແບ່ງຄວາມຮັບຜິດຊອບໃນການອອກໃບຢັ້ງຢືນຖານລະບົບດິຈິຕອນ ລະຫວ່າງ ກົມເຕັກໂນໂລຊີດິຈິຕອນ (ກຕດ) ແລະ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງ, ແຂວງ

| ລຳດັບ | ລາຍການ | ກະຊວງ ຕສ | ພະແນກ ຕສ |
|---|---|---|---|
| 01 | ຖານລະບົບການຄ້າ | + | |
| | ກ. ໂປແກຣມຂາຍສິນຄ້າ, ຕູ້ຂາຍສິນຄ້າ | | + |
| | ຂ. ຖານລະບົບການຄ້າອື່ນ | + | |
| 02 | ຖານລະບົບການເງິນ | | |
| | ກ. ໂປຣແກຣມຕູ້ຮັບຝາກ-ຖອນເງິນສົດ | | + |
| | ຂ. ຖານລະບົບການເງິນອື່ນ | + | |
| 03 | ຖານລະບົບຂົນສົ່ງ ແລະ ໂລຊິດສະຕິກ | + | |
| 04 | ຖານລະບົບການສຶກສາ | | + |
| 05 | ຖານລະບົບບໍລິການສາທາລະນະສຸກ | + | |
| 06 | ຖານລະບົບບໍລິການທ່ອງທ່ຽວ | + | |
| 07 | ຖານລະບົບບໍລິການເນື້ອຫາດິຈິຕອນ | + | |
| 08 | ຖານລະບົບເຄືອຂ່າຍສື່ສັງຄົມ | + | |
| 09 | ຖານລະບົບດິຈິຕອນອື່ນ | + | |
| 10 | ການແຈ້ງຂຶ້ນທະບຽນຖານລະບົບດິຈິຕອນຂອງຕ່າງປະເທດ | + | |